ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດບັນທຶກມອບ-ຮັບ

## ວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້

## ລະຫວ່າງ

## ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງກະສິກຳ ແລະ ປ່າໄມ້

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021.

ອີງຕາມການຕົກລົງຂອງລັດຖະບານ, ໃນວັນທີ 11 ພະຈິກ 2021 ກະຊວງອຸດສະຫະກຳ ແລະ ການຄ້າ ໄດ້ມອບວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ຂັ້ນຕົ້ນ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເພື່ອຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ຕາມດຳລັດສະບັບເລກທີ 603/ນຍ ແລະ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021. ພິທີມອບ-ຮັບວຽກງານດັ່ງກ່າວ ໄດ້ຈັດຂຶ້ນທີ່ກະຊວງກະສິກຳ ແລະ ປ່າໄມ້ ໂດຍການເຂົ້າຮ່ວມ ຂອງ ທ່ານ ປອ. ຄຳແພງ ໄຊສົມແພງ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ແລະ ທ່ານ ປອ. ເພັດ ພົມພິພັກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ແລະ ການເປັນສັກຂີພະຍານຂອງ ທ່ານ ຄຳລາວັນ ຈັນທະລາວັນ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ແລະ ທ່ານ ນ. ລີວົງ ລາວລີ ຮອງລັດຖະມົນຕີກະຊວງພາຍໃນ, ບັນດາທ່ານຮອງລັດຖະມົນຕີ, ບັນດາທ່ານຫົວໜ້າກົມ, ຫ້ອງການ, ສະຖາບັນ ຂອງ 2 ກະຊວງເຂົ້າຮ່ວມ.

ບັນຊີໂຮງງານປຸງແຕ່ງກະສິກຳ ແລະ ປ່າໄມ້ ທີ່ມອບ-ຮັບ ໄດ້ຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງເຮັດບົດບັນທຶກສະບັບນີ້ໄວ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ນະຄອນຫຼວງວຽງຈັນ, ວັນທີ 11 ພະຈິກ 2021

| ຜູ້ຮັບ | ຜູ້ມອບ |
|---|---|
| ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ | ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ |
| ປອ. ເພັດ ພົມພິພັກ | ປອ. ຄຳແພງ ໄຊສົມແພງ |

## ບັນຊີຄັດຕິດ ໂຮງງານອຸດສາຫະກຳປຸງແຕ່ງກະສິກຳ ແລະ ປ່າໄມ້

1. ໂຮງສີເຂົ້າ
2. ໂຮງງານປຸງແຕ່ງແປ້ງມັນຕົ້ນ
3. ໂຮງງານປຸງແຕ່ງອ້ອຍ
4. ໂຮງງານຂ້າສັດ
5. ໂຮງງານຜະລິດອາຫານສັດ
6. ໂຮງງານຜະລິດວັກຊີນ, ຢາປາບສັດຕູພືດ, ຢາປົວສັດ ແລະ ເຄື່ອງມືສັດຕະວະແພດ
7. ໂຮງງານປຸງແຕ່ງໄມ້, ໂຮງເລື່ອຍ, ໂຮງຊອຍ, ໂຮງເຟີນີເຈີ
8. ໂຮງງານປຸງແຕ່ງ ຢາງພາລາ ແລະ ເຄື່ອງປ່າຂອງດົງ
9. ໂຮງງານຜະລິດຝຸ່ນຊີວະພາບ ແລະ ອິງຄະທາດ
10. ໂຮງງານຄັດແຍກເມັດພັນ ແລະ ຫຸ້ມຫໍ່ ຜົນຜະລິດກະສິກຳ
11. ໂຮງງານຜະລິດເຄື່ອງມື ແລະ ກົນຈັກກະສິກຳ